ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

Basic Education Quality and Access in Lao PDR







# TTC Quarterly Meeting Media Report

## (07-29 September 2023)

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ, ຕາງໜ້າໃຫ້ລັດຖະບານອົດສະຕຣາລີ

Basic Education Quality and Access in Lao PDR is managed by Tetra Tech International Development, on behalf of the Australian Government.

# TTC Quarterly Meeting
# Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2023-09-11 | Newspaper | Economic and Commerce | Front and page 5 |
| 2023-09-12 | Newspaper | Vientiane Times | Page 4 |
| 2023-09-12 | Newspaper | Vientiane Mai | Page 2 |
| 2023-09-07 | Social Media | Vientiane Mai Facebook | 56K Followers |
| 2023-09-08 | Social Media | Army radio FM 99,7 MHz Facebook | 16K Followers |
| 2023-09-08 | Social Media | Education, Sciences and Sports Daily News Facebook | 6.9K Followers |
| 2023-09-08 | Social Media | Pasaxon Facebook | 22K Followers |
| 2023-09-08 | Social Media | Edu-Sport TV Online Facebook | 64K Followers |
| 2023-09-29 | Social Media | Tetra Tech International Development Facebook | 34K Followers |
| 2023-09-29 | Social Media | Tetra Tech International Development LinkedIn | 56K Followers |
| 2023-09-07 | Website | KPL English Website | Read article here |
| 2023-09-08 | Website | Vientiane Mai Website | Read article here |
| 2023-09-08 | Website | Pasaxon Website | |
| 2023-09-10 | Website | BEQUAL Website | Read article here |
| 2023-09-13 | Radio | Public Security Radio FM 101.5 | |
| 2023-09-13 | Radio | Amy Radio FM 99.7 | |
| 2023-09-13 | Radio | Vientiane Radio FM 105.5 | |
| 2023-09-13 | Radio | Lao National Radio<br><br>FM 103.7 | |
| 2023-09-13 | Radio | Lao Youth Radio FM 90.00 MHZ | |
| 2023-09-13 | Radio | Education Radio<br><br>FM 103.7 MHZ | |
| 2023-09-12 | WhatsApp | MT-PT WhatsApp and FB groups | 19 groups<br>+/- 660 members |
| 2023-09-12 | WhatsApp | PESS-DESB | 18 Provincial groups<br>452 members |
| 2023-09-12 | WhatsApp | ETSP | 3 groups<br>98 members |
| 2023-09-12 | WhatsApp | Pre-Service Writing team | 8 TTCs and 2 universities<br>72 members |
| 2023-09-12 | WhatsApp | Target DESB | Teacher Dev Units in 30 target districts |

| | | | |
|---|---|---|---|
| | | | 64 members |
| 2023-09-12 | WhatsApp | Target TTC | Key coordinators from the 3 target TTCs<br>17 members |

## Pictures of articles in the media

| 2023-09-11 | Newspaper | Economic and Commerce | Front and page 5 |
|---|---|---|---|



**ສ້າງຄວາມເຂັ້ມແຂງໃຫ້ ວິທະຍາໄລຄູ 3 ແຫ່ງ ແລະ 7 ແຂວງເປົ້າໝາຍ**

ວິທະຍາໄລຄູເປົ້າໝາຍ 3 ແຫ່ງ ແລະ 7 ແຂວງເປົ້າໝາຍ ຂອງແຜນງານບີຄອາ ໄດ້ແລກປ່ຽນບົດຮຽນ ແລະ ປຶກສາຫາລືວຽກງານໃນຕໍ່ໜ້າ ເພື່ອສ້າງຄວາມເຂັ້ມແຂງດ້ານການພັດທະນາຂີດຄວາມສາມາດດ້ານການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນຂັ້ນໂຮງຮຽນ.

ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ( ສສກ ) ໄດ້ຈັດກອງປະຊຸມປະຈຳໄຕມາດທີ 2 ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ( CPD ) ເຊິ່ງມີຜູ້ເຂົ້າຮ່ວມ 79 ທ່ານ ທີ່ມາຈາກກົມສ້າງຄູ, ກົມສາມັນສຶກສາ,

➡ ອ່ານຕໍ່ໜ້າ A5



**ສ້າງຄວາມ ...**

| 2023-09-12 | Newspaper | Vientiane Times | Page 4 |
|---|---|---|---|



Director General of the Teacher Education Department at the Ministry of Education and Sports, Mr Keth Phanlack, together with other officials from the ministry and the provinces of Xieng Khuang, Luang Namtha and Savannakhet, attend a meeting on the training of teachers in vocational education, at Khangkhay Teacher Training College in Xieng Khuang province. --*Photo Sports Daily News*

| 2023-09-12 | Newspaper | Vientiane Mai | Page 2 |
|---|---|---|---|



ວຽງຈັນໃໝ່ VIENTIANE MAI NEWSPAPER

ວັນທີ 12/09/2023

# ສ້າງຄວາມເຂັ້ມແຂງການພັດທະນາຂີດຄວາມສາມາດວິຊາຊີບຄູ

● ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ຈັດກອງປະຊຸມປະຈຳໄຕມາດທີ 2 ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ຈັດຂຶ້ນເມື່ອບໍ່ດົນມານີ້ ທີ່ວິທະຍາໄລຄູຄັງໄຂ ແຂວງຊຽງຂວາງ ມີກົມສ້າງຄູ ກົມສາມັນສຶກສາ ວິທະຍາໄລຄູເປົ້າໝາຍ 3 ແຫ່ງ ຂອງແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) (ຄັງໄຂ ຫຼວງນ້ຳທາ ແລະ ສະຫວັນນະເຂດ) ແລະ 7 ແຂວງເປົ້າໝາຍໃນເຂດບໍລິການ (ຊຽງຂວາງ ຫົວພັນ ຫຼວງນ້ຳທາ ຜົ້ງສາລີ ບໍ່ແກ້ວ ສະຫວັນນະເຂດ ແລະ ຄຳມ່ວນ) ພ້ອມດ້ວຍຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ) ຈາກ 30 ເມືອງທີ່ນອນໃນເມືອງເປົ້າໝາຍຂອງແຜນງານບີຄວາເຂົ້າຮ່ວມ.

ທ່ານ ເກດ ພັນລັກ ຫົວໜ້າກົມສ້າງຄູ ໄດ້ກ່າວວ່າ: ກະຊວງ ສສກ ມີຄວາມມຸ່ງໝັ້ນທີ່ຈະສະໜັບສະໜູນການປັບປຸງການເຂົ້າເຖິງຄຸນນະພາບຂອງການພັດທະນາວິຊາຊີບຄູໃນ ສປປ ລາວ ແລະ ມີຄວາມຍິນດີທີ່ໄດ້ຮ່ວມມືກັບລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ ເພື່ອບັນລຸເປົ້າໝາຍດັ່ງກ່າວ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເປັນວິທີທີ່ສຳຄັນເພື່ອສະໜັບສະໜູນການປັບປຸງ ການຮຽນ-ການສອນ ໃນຫ້ອງຮຽນຊັ້ນປະຖົມ ສິ່ງສຳຄັນແມ່ນຕ້ອງຮັບປະກັນຄຸນນະພາບຂອງບັນດາກິດຈະກຳການພັດທະນາວິຊາຊີບຄູເພື່ອຮັບປະກັນວ່າຄູສອນຈະໄດ້ຮັບການສະໜັບສະໜູນທີ່ດີ.

ກົມສ້າງຄູ ກະຊວງ ສສກ ແລະ ລັດຖະບານອົດສະຕຣາລີ ໂດຍແຜນງານບີຄວາ ໄລຍະທີ 2 ກຳລັງເຮັດວຽກຮ່ວມກັນ ເພື່ອພັດທະນາຂີດຄວາມສາມາດໃຫ້ແກ່ວິທະຍາໄລຄູ 3 ແຫ່ງ ເພື່ອພັດທະນາວິຊາຊີບຄູແບບຕໍ່ເນື່ອງ ຈຸດປະສົງແມ່ນເພື່ອກະຈາຍຄວາມຮັບຜິດຊອບໃນການສົ່ງເສີມວຽກງານ CPD ລົງສູ່ລະດັບທ້ອງຖິ່ນ ໂດຍການສ້າງລະບົບດຳເນີນການປະຕິບັດ ແລະ ສ້າງໃຫ້ເປັນວັດທະນະທຳຂອງສະຖາບັນຂອງຄົນໂດຍສະເພາະ ຢູ່ໃນຂັ້ນໂຮງຮຽນ ພ້ອມດຽວກັນຍັງໄດ້ມີການແບ່ງຂັ້ນການພັດທະນາວິຊາຊີບຄູໂດຍການສ້າງຕັ້ງ ປະຕິບັດ ແລະ ການຈັດຕັ້ງລະບົບຂອງ CPD ໃນໂຮງຮຽນ ນຳພາໂດຍບັນດາວິທະຍາໄລຄູ ໃນແຕ່ລະແຂວງຮ່ວມກັບ ສກມ ວິທະຍາໄລ ຈະນຳພາການປະຕິບັດຍຸດທະສາດຂອງວຽກງານ CPD ໃນຂັ້ນໂຮງຮຽນ ແລະ ໃນຂອບເຂດການໃຫ້ບໍລິການຂອງພວກເຂົາ ໂດຍເນັ້ນໜັກໃສ່ການສ້າງຄວາມອາດສາມາດໃຫ້ແກ່ນັກວຽກສຶກສານິເທດພາຍໃນ ສກມ ຈະຮັບຜິດຊອບດ້ານການປະເມີນຄວາມຕ້ອງການ ການຄຸ້ມຄອງ ແລະ ການຮັບປະກັນຄຸນນະພາບຂອງການຮຽນຮູ້ຂອງຄູ ແລະ ການພັດທະນາດ້ານວິຊາຊີບ.

ກອງປະຊຸມຍັງໄດ້ແລກປ່ຽນຄວາມຄິດເຫັນກັນ ແລະ ກັບ ການສະທ້ອນຄືນດ້ານວຽກງານຂອງວິທະຍາໄລຄູ ແລະ ພະແນກສຶກສາທິການ ແລະ ກິລາ (ພສກ) ຮ່ວມກັບບັນດາຄູຮ່ວມງານ ເຊັ່ນ: ກົມສ້າງຄູ ເພື່ອຮ່ວມກັນໃນການວາງແຜນ ຈັດຕັ້ງປະຕິບັດ ແລະ ການລົງຕິດຕາມປະເມີນຜົນທີ່ໂຮງຮຽນ ແລະ ຂອບເຂດເມືອງໃນເຂດບໍລິການຂອງເຂົາເຈົ້າ ກົນໄກການໃຫ້ບໍລິການຂອງພວກເຂົາ ແບບເພື່ອຊ່ວຍກົມສ້າງຄູ ແລະ ບັນດາແຂວງທີ່ບໍ່ແມ່ນແຂວງເປົ້າໝາຍຂອງແຜນງານບີຄວາ ໃຫ້ສາມາດໄດ້ຮັບຂໍ້ມູນຂ່າວສານ ແລະ ຄຳແນະນຳ ໃນການຍົກລະດັບດ້ານການປະຕິບັດການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນບັນດາແຂວງອື່ນໆ ທີ່ບໍ່ແມ່ນແຂວງເປົ້າໝາຍຂອງແຜນງານ ໃຫ້ປະສົບຄວາມສຳເລັດ.

ສຳລັບປີ 2023-2024 ໄດ້ຕົກລົງເປັນເອກະພາບກັນວ່າ ມີຄວາມຈຳເປັນຕ້ອງສ້າງແຜນວຽກຈາກຂໍ້ມູນຜົນສຳເລັດຂອງປີຜ່ານມາ ແລະ ສືບຕໍ່ອຳນວຍຄວາມສະດວກໃຫ້ແກ່ບັນດາຜູ້ເຂົ້າຮ່ວມ ໃຫ້ຮັກສາພື້ນຖານ ແລະ ຄວາມຮັບຜິດຊອບ ເພື່ອໃຫ້ພວກເຂົາສາມາດປະຕິບັດພາລະບົດບາດການໃຫ້ການຊ່ວຍເຫຼືອຄູໃນລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ແຜນງານບີຄວາໄດ້ນຳສະເໜີກ່ຽວກັບຫ້ອງສະໝຸດອອນລາຍຂອງວຽກງານການພັດທະນາວິຊາຊີບຄູແບບຕໍ່ເນື່ອງທີ່ສ້າງຂຶ້ນໃໝ່ ຫ້ອງສະໝຸດອອນລາຍນີ້ ໄດ້ຖືກສ້າງຕັ້ງຂຶ້ນໃນ google drive ເພື່ອເຮັດໃຫ້ ວຄ ສກຂ ແລະ ສກມ ສາມາດປະສານງານກັນໄດ້ງ່າຍໃນການ ດ້ານການວາງແຜນ ແລະ ການປະຕິບັດກິດຈະກຳ CPD ເອກະສານຢູ່ໃນ drive ຍັງຈະສາມາດເຂົ້າເຖິງບັນດາ ວຄ ທີ່ບໍ່ນອນໃນແຂວງເປົ້າໝາຍ ເພື່ອເປັນການຂະຫຍາຍກິດຈະກຳ CPD ໃນເຂດບໍລິການຂອງພວກເຂົາ ຫ້ອງສະໝຸດ CPD ອອນລາຍຈະສາມາດເຂົ້າເຖິງໄດ້ຈາກອຸປະກອນຕ່າງໆ ລວມທັງຈາກແທັບເລັດ ທີ່ສະໜອງໃຫ້ໂດຍແຜນງານບີຄວາແກ່ບັນດາ 30 ສກມ ແລະ 1.043 ຜູ້ເຮັດວຽກສຶກສານິເທດພາຍໃນ.

| 2023-09-07 | Vientiane Mai Facebook |
|---|---|

Vientiane Mai
September 7 at 5:26 PM ·

ສ້າງຄວາມເຂັ້ມແຂງດ້ານການພັດທະນາຂີດຄວາມສາມາດດ້ານວິຊາຊີບຄູ

..............................................................
ເມື່ອບໍ່ດົນຜ່ານມາ ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ຈັດກອງປະຊຸມປະຈຳໄຕມາດທີ 2 ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ຂຶ້ນທີ່ວິທະຍາໄລຄູຕົ້ງໄຂ ແຂວງຊຽງຂວາງເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 79 ທ່ານ ທີ່ມາຈາກ ກົມສ້າງຄູ ກົມສາມັນສຶກສາ ວິທະຍາໄລຄູເປົ້າໝາຍ 3 ແຫ່ງ ຂອງແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ມີ (ຕົ້ງໄຂ ຫຼວງນ້ຳທາ ແລະ ສະຫວັນນະເຂດ) ແລະ 7 ແຂວງເປົ້າໝາຍໃນເຂດບໍລິການ (ຊຽງຂວາງ ຫົວພັນ ຫຼວງນ້ຳທາ ຜົ້ງສາລີ ບໍ່ແກ້ວ ສະຫວັນນະເຂດ ແລະ ຄຳມ່ວນ) ພ້ອມດ້ວຍຫ້ອງການສຶກສາທິການ ແລະ ກິລາ ເມືອງ (ສກມ) ຈາກ 30 ເມືອງ ທີ່ນອນໃນເມືອງເປົ້າໝາຍຂອງແຜນງານບີຄວາ.
#ກົດອ່ານຂໍ້ມູນເພີ່ມຕື່ມ👇
https://v2.vientianemai.net/archives/59571
#VientianeMai
#BM




14 · 1 share

Like · Comment · Share

| 2023-09-08 | Army radio FM 99,7 MHz Facebook |
|---|---|

ວິທະຍຸກະຈາຍສຽງກອງທັບປະຊາຊົນລາວ FM 99,7 MHz
September 8 at 3:48 PM ·

ວິທະຍາໄລຄູເປົ້າໝາຍ 3 ແຫ່ງ ແລະ 7 ແຂວງແລກປ່ຽນບົດຮຽນເພື່ອພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນຂົ້ນໂຮງຮຽນ
====================================
ເມື່ອບໍ່ດົນຜ່ານມາ, ທີ່ວິທະຍາໄລຄູຕົ້ງໄຂ ແຂວງຊຽງຂວາງ ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບລັດຖະບານອົດສະຕຣາລີ, ຈັດກອງປະຊຸມປະຈຳໄຕມາດທີ 2 ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD), ເຊິ່ງມີຜູ້ຕາງໜ້າຈາກກົມສ້າງຄູ, ກົມສາມັນສຶກສາ, ວິທະຍາໄລຄູເປົ້າໝາຍ 3 ແຫ່ງ ຂອງແຜນງານບີຄວາ (ຕົ້ງໄຂ, ຫຼວງນ້ຳທາ ແລະ ສະຫວັນນະເຂດ) ແລະ 7 ແຂວງເປົ້າໝາຍໃນເຂດບໍລິການ (ຊຽງຂວາງ, ຫົວພັນ, ຫຼວງນ້ຳທາ, ຜົ້ງສາລີ, ບໍ່ແກ້ວ, ສະຫວັນນະເຂດ ແລະ ຄຳມ່ວນ) ແລະ ພະນັກງານທີ່ກ່ຽວຂ້ອງຈາກ 30 ເມືອງ ທີ່ນອນໃນເມືອງເປົ້າໝາຍຂອງແຜນງານບີຄວາ ເຂົ້າຮ່ວມ.
ກອງປະຊຸມໄດ້ດຳເນີນເປັນເວລາ 2 ວັນ ເພື່ອແລກປ່ຽນບົດຮຽນ ແລະ ປຶກສາຫາລື ກ່ຽວກັບການປະຕິບັດໜ້າວຽກການພັດທະນາວິຊາຊີບຄູແບບຕໍ່ເນື່ອງຜ່ານມາ ແລະ ວາງແຜນປະຕິບັດວຽກງານໃນອະນາຄົດ.
ທ່ານ ເກດ ພັນລັກ, ຫົວໜ້າກົມສ້າງຄູ ໄດ້ກ່າວວ່າ "ກະຊວງສຶກສາທິການ ແລະ ກິລາ ມີຄວາມມຸ່ງໝັ້ນທີ່ຈະສະໜັບສະໜູນການປັບປຸງການເຂົ້າເຖິງ ຄຸນນະພາບຂອງການພັດທະນາວິຊາຊີບຄູໃນ ສປປ ລາວ ແລະ ມີຄວາມຍິນດີທີ່ໄດ້ຮ່ວມມືກັບລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ ເພື່ອບັນລຸເປົ້າໝາຍດັ່ງກ່າວ. ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເປັນວິທີທີ່ສຳຄັນເພື່ອສະໜັບສະໜູນການປັບປຸງການຮຽນ-ການສອນໃນຫ້ອງຮຽນຊັ້ນປະຖົມ. ສິ່ງສຳຄັນແມ່ນຕ້ອງຮັບປະກັນຄຸນນະພາບຂອງບັນດາກິດຈະກຳການພັດທະນາວິຊາຊີບຄູເພື່ອຮັບປະກັນວ່າຄູສອນຈະໄດ້ຮັບການສະໜັບສະໜູນທີ່ດີ."
ກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ແລະ ລັດຖະບານອົດສະຕຣາລີ ໂດຍແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າເຖິງການສຶກສາຂັ້ນພື້ນຖານໃນ ສປປ ລາວ (ແຜນງານບີຄວາ) ໄລຍະທີ 2 ກຳລັງເຮັດວຽກຮ່ວມກັນເພື່ອພັດທະນາຂີດຄວາມສາມາດໃຫ້ແກ່ວິທະຍາໄລຄູ 3 ແຫ່ງ ເພື່ອພັດທະນາວິຊາຊີບຄູແບບຕໍ່ເນື່ອງ. ກອງປະຊຸມຍັງໄດ້ແລກປ່ຽນຄວາມຮູ້ເຊິ່ງກັນ ແລະ ກັນ, ການສະທ້ອນຄືນດ້ານວຽກງານຂອງວິທະຍາໄລຄູ ແລະ ພະແນກສຶກສາທິການ ແລະ ກິລາ (ສກຂ) ຮ່ວມກັບບັນດາຄູ່ຮ່ວມງານ.



| 2023-09-08 | Education, Sciences and Sports Daily News Facebook |
| --- | --- |

ໜັງສືພິມສຶກສາ-ກິລາລາຍວັນ
September 8 at 11:19 AM ·

ສສກ ຫາລືການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ພ້ອມວາງແຜນປະຕິບັດໃນຕໍ່ໜ້າ

-----------------------------------------------------------------------------

ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ຈັດກອງປະຊຸມປະຈຳໄຕມາດທີ 2 ກ່ຽວກັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ເມື່ອບໍ່ດົນມານີ້ ທີ່ວິທະຍາໄລຄູຄັງໄຂ ແຂວງຊຽງຂວາງໂດຍພາຍໃຕ້ການເປັນປະທານຂອງທ່ານ ພອດ ພັນລັກ ຫົວໜ້າກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ, ມີບັນດາຜູ້ຕາງໜ້າຈາກກົມສ້າງຄູ, ກົມສາມັນສຶກສາ, ວິທະຍາໄລຄູເປົ້າໝາຍ 3 ແຫ່ງຂອງແຜນງານ... See more



9 · 1 share

| 2023-09-08 | Pasaxon Facebook |
| --- | --- |

ປະຊາຊົນ
September 8 at 3:08 PM ·

ສສກ ຫາລືການພັດທະນາວິຊາຊີບຄູແບບຕໍ່ເນື່ອງ

...............

ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບ ລັດຖະບານອົສຕຣາລີ ໄດ້ຈັດກອງປະຊຸມປະຈຳໄຕມາດທີ 2 ກ່ຽວກັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ຂຶ້ນເມື່ອບໍ່ດົນມານີ້ ທີ່ວິທະຍາໄລຄູຄັງໄຂ ແຂວງຊຽງຂວາງ ໂດຍພາຍໃຕ້ການເປັນປະທານຂອງທ່ານ ພອດ ພັນລັກ ຫົວໜ້າກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ, ມີບັນດາຜູ້ຕາງໜ້າຈາກກົມສ້າງຄູ, ກົມສາມັນສຶກສາ, ວິທະຍາໄລຄູເປົ້າໝາຍ 3 ແຫ່ງຂອງແຜນງານບີຄວາ (ຄັງໄຂ, ຫຼວງນ້ຳທາ ແລະ ສະຫວັນນະເຂດ) ແລະ 7 ແຂວງເປົ້າໝາຍໃນເຂດບໍລິກ... See more



13 · 4 shares

| 2023-09-08 | Edu-Sport TV Online Facebook |
|---|---|

Edu-Sport TV online
September 8 at 8:31 AM ·

"ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບ ລັດຖະບານອົດສະຕຣາລີ ຈັດກອງປະຊຸມປະຈຳໄຕມາດທີ 2 ກ່ຽວກັບ ພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນບັນດາແຂວງເປົ້າໝາຍ"

//////////////////////

ໃນວັນທີ 30 ສິງຫາ 2023, ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ (ສສກ), ໄດ້ຈັດກອງປະຊຸມປະຈຳໄຕມາດທີ 2 ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (CPD) ຂຶ້ນທີ່ ວິທະຍາໄລຄູຄັງໄຂ, ແຂວງຊຽງຂວາງ, ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 79 ທ່ານ ທີ່ມາຈາກ ກົມສ້າງຄູ, ກົມສາມັນສຶກສາ, ວິທະຍາໄລຄູເປົ້າໝາຍ 3 ແຫ່ງ ຂອງແຜນງານບີຄວາ (ຄັງໄຂ, ຫຼ... See more







Corinne Javary, Lamxe Liamsithisack and 54 others
6 shares

| 2023-09-29 | Tetra Tech International Development Facebook and LinkedIn |
|---|---|

Tetra Tech International Development
56,376 followers
5d •

For society to progress, prioritising education is crucial, guiding bright minds and fostering strong communities.

The Ministry of Education and Sports, in collaboration with the Australian Government through the Basic Education Quality Access and Education in Lao PDR #BEQUAL program, held their 2nd quarterly meeting at Khang Khay TTC in Xiangkhouang.

Their united objective? Strengthening the continuing professional development (CPD) for teachers in key areas of Lao PDR. A gathering of 79 representatives deliberated on the milestones and charted out the future trajectory of CPD.

This partnership also introduced an innovative online CPD library on Google Drive, enabling seamless, real-time collaboration among educators.

As Mr. Keth Phanhlack, the Director General of the Department of Teacher Education (DTE), emphasised, success hinges on collective efforts, adaptability, and a shared commitment to teacher growth.

#TetraTechInternationalDevelopment #BEQUAL







16

Tetra Tech International Development Services
5d ·

For society to progress, prioritising education is crucial, guiding bright minds and fostering strong communities.

The Ministry of Education and Sports, in collaboration with the Australian Government through the Basic Education Quality Access and Education in Lao PDR #BEQUAL program, held their 2nd quarterly meeting at Khang Khay TTC in Xiangkhouang.

Their united objective? Strengthening the continuing professional development (CPD) for teachers in key areas of Lao PDR. A gathering of 79 representatives deliberated on the milestones and charted out the future trajectory of CPD.

This partnership also introduced an innovative online CPD library on Google Drive, enabling seamless, real-time collaboration among educators.

As Mr. Keth Phanhlack, the Director General of the Department of Teacher Education (DTE), emphasised, success hinges on collective efforts, adaptability, and a shared commitment to teacher growth.

#TetraTechInternationalDevelopment #BEQUAL







4
1 comment

